# ບົດຂ່າວກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈໍາປີ 2021




ໃນຕອນບ່າຍຂອງວັນທີ 29 ຕຸລາ 2021 ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມເມືອງແທ່ງ, ນະຄອນຫຼວງວຽງຈັນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ເປີດກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ປະຈໍາປີ 2021 ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຮອງລັດຖະມົນຕີກະຊວງການເງິນ ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈໍານວນ 19 ທ່ານ, ຜູ້ມອບສິດຈໍານວນ 163 ທ່ານ, ໃນນັ້ນ ມີຕາງໜ້າຜູ້ຖືຮຸ້ນລັດຖະບານໂດຍ ທ່ານ ປະສົມເພັດ ຄໍາຕັນ ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ກະຊວງການເງິນ, ຕາງໜ້າຄູ່ຮ່ວມຍຸດທະສາດ ໂດຍ ທ່ານ ສະເຕຟານ ອຽກແບັງ ຜູ້ອໍານວຍການທະນາຄານລາວຝລັ່ງ ແລະ ມີຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ ແລະ ຄະນະກໍາມະການຄຸ້ມຄອງຫຼັກຊັບເຂົ້າຮ່ວມຕິດຕາມກອງປະຊຸມຕາມລະບຽບການ, ເຊິ່ງກອງປະຊຸມກໍ່ໄດ້ເອົາໃຈໃສ່ໃນການປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງເຄັ່ງຂັດ.




ກອງປະຊຸມ ໄດ້ຮັບຮອງເອົາບົດບັດທຶກກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ ແລະ ຮັບຟັງການລາຍງານສະພາບການດຳເນີນງານຂອງ ທຄຕລ ໄລຍະຜ່ານມາ ທີ່ມີຄວາມຫຍຸ້ງຍາກຍ້ອນຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ທີ່ມີຫຼາຍທຸລະກິດຂອງລູກຄ້າສິນເຊື່ອ ທຄຕລ ໄດ້ຮັບຜົນກະທົບແກ່ຍາວມາຕັ້ງແຕ່ປີ 2020. ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຮອງເອົາ 2 ວາລະສຳຄັນຄື: ຮັບຮອງການດັດແກ້ແຜນການປະຈຳປີ 2021 ແລະ ຮັບຮອງເອົາສະມາຊິກສະພາບໍລິຫານຊຸດໃໝ່ຂອງ ທຄຕລ ເຊິ່ງລວມມີ 9 ທ່ານ (ໃນນີ້ມີສະມາຊິກອິດສະລະຈຳນວນ 4 ທ່ານ) ໃນຈຳນວນສະມາຊິກສະພາບໍລິຫານຊຸດໃໝ່ ທີ່ລ້ວນແຕ່ແມ່ນຜູ້ທີ່ມີປະສົບການໃນດ້ານຕ່າງໆ ທີ່ຈະມາຊີ້ນຳ-ນຳພາ ທຄຕລ ໃຫ້ມີການພັດທະນາຢ່າງມີປະສິດທິຜົນ ສ້າງຜົນປະໂຫຍດສູງສຸດໃຫ້ຜູ້ຖືຮຸ້ນ ທຄຕລ ໃນຕໍ່ໜ້າ.